# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 11 -ມິຖຸນາ- 2006 (6-11-006)

## <u>ດານີເອນ: ຄວາມເຊື່ອທີ່ປະຕິເສດໃນການລົງລອຍໃນທາງຜິດ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ດານີເອນ 6:3-5, 10-13, 16, 19-23, 25-27

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ການພັທນາຊີວິດໃຫ້ມີຄວາມສັດຊື່ແລະອຸທິດຕົວໃຫ້ພຣະເຈົ້າ, ຜູ້ທີ່ເຊື່ອສາມາດປະຕິເສດໃນການລົງລອຍໃນທາງຜິດ ເຖິງແມ່ນວ່າພວກເຂົາຈະຖືກການນາບຂູ່ກໍຕາມ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ອອກແບບເພື່ອຊ່ອຍເສີມສ້າງຄວາມເຊື່ອຂອງທ່ານໃຫ້ແຂງແກ່ນແລະຄົງທົນຕລອດໄປ:

- ♦ ໃຫ້ລະນຶກຢູ່ວ່າ ຜູ້ທີ່ເຊື່ອຈະຖືກລໍ້ລວງໃຫ້ລົງລອຍໃນທາງຜິດ; ແລະ
- ♦ ຕັດສິນໃຈປະຕິບັດໃຫ້ເຫັນຄວາມເຊື່ອທີ່ບໍ່ມີການລົງລອຍໃນທາງຜິດ

## <u>ຂ້າພະເຈົ້າຈະສາມາດໃຊ້ຊີວິດດ້ວຍຄວາມເຊື່ອທີ່ບໍ່ລົງລອຍໃນທາງຜິດ ເຖິງແມ່ນວ່າຂ້າພະເຈົ້າຈະຕ້ອງມີການສູນເສັຽໄດ້ຢ່າງໃດ?</u>

ໃນຂນະທີ່ຂ້າພະເຈົ້າໄດ້ເດີນທາງໄປເພື່ອພັນທະກິດຂອງພຣະເຈົ້າໃນປະເທດອູເຄຣງ ພວກຂ້າພະເຈົ້າໄດ້ປະສານງານກັບສິດຍາພິບານທ້ອງຖິ່ນຄົນນຶ່ງ ຄວາມເຊື່ອຂອງລາວໄດ້ຈເຣີນຂຶ້ນດ້ວຍຜ່ານການທົດສອບອັນໃຫຍ່ຫລວງ. ຫລາຍປີກ່ອນນັ້ນ ໃນຂນະທີ່ລາວຮັບໃຊ້ເປັນຂ້າຣາຊການທະຫານ ພວກເຂົາຮູ້ວ່າລາວເປັນຄຣິສຕຽນ ພວກເຂົາຈຶ່ງພະຍາຍາມເຮັດໃຫ້ລາວອົດຢູ່ອົດນອນເພື່ອໃຫ້ຮ່າງກາຍຂອງລາວເພັຽລົງ. ໃນຂນະທີ່ພວກຂ້າພະເຈົ້າຢູ່ນັ້ນ ລາວໄດ້ຖືກຂັ້ນເທິງຮ້ອງໄປສອງເທື່ອ ແລະສອບຖາມການໄປມາຂອງລາວແລະຄົນທີ່ຢູ່ໃນໂບດດ້ວຍ.

ເຫມືອນກັບດານີເອນໃນບົດຮຽນນີ້ ສິດຍາພິບານຜູ້ນີ້ບໍ່ຍອມໃຫ້ຄວາມເຊື່ອຂອງລາວລົງລອຍໄປໃນທາງຜິດ. ດ້ວຍພຣະຄຸນຂອງພຣະເຈົ້າ ພຣະອົງຊົງຮັກສາລາວໄວ້ແລະຂ່າວປະເສີດກໍເຜີຍແຜ່ອອກໄປ. ໃນຂນະທີ່ພວກເຮົາສຶກສາບົດຮຽນນີ້ ພວກເຮົາຈະພົບວ່າ ພວກເຮົາກໍສາມາດຮຽນຮູ້ ເພື່ອຈະດຳເນີນຊີວິດໃນຄວາມເຊື່ອທີ່ຈະບໍ່ລົງລອຍໃນທາງທີ່ຜິດ-ເຖິງແມ່ນວ່າຈະຖືກການນາບຂູ່ປານໃດກໍຕາມ.

## <u>ສຶກສາພຣະຄັມພີ</u>

1. **<u>ສະແດງອອກໃຫ້ເຫັນຄຸນລັກສະນະທີ່ປາສຈາກການຕິຕຽນ</u>** (ດານີເອນ 6:3-5)

ກະສັດດາຣິອຸດຊົງເລືອກດານີເອນໃຫ້ຮັບໃຊ້ເປັນ **ຜູ້ກວດຣາຊການແຜ່ນດິນ** ເພື່ອເບິ່ງແຍງວຽກງານຂອງ **ເຈົ້າແຂວງ** ຮ້ອຍຊາວຄົນທີ່ພຣະອົງໄດ້ເລືອກໄວ້. **ເຈົ້າແຂວງ** ເປັນຜູ້ປົກຄອງຕາມແຂວງຕ່າງໆໃນຈັກກະພັດເປີເຊັຽ. ລາວເຮັດໃຫ້ເຫັນວ່າ ລາວມີຄຸນລັກສະນະທີ່ຫນ້ານັບຖືຫລາຍຢ່າງ. ອັນນຶ່ງນັ້ນແມ່ນລາວເປັນຄົນສັດຊື່. ກະສັດຊົງເລືອກເອົາແຕ່ຜູ້ທີ່ພຣະອົງໄວ້ວາງໃຈໄດ້. ລາວເອງກໍໄດ້ສະແດງໃຫ້ກະສັດເຫັນວ່າ **ລາວໄດ້ກະທຳການດີກວ່າ** ຜູ້ນຳຄົນອື່ນໆເພາະວ່າ **ລາວມີຄວາມສາມາດຫລາຍນີ້ເອງ.** ຕາມຄວາມຈິງແລ້ວ ລາວເປັນຄົນຍິວແລະລາວເປັນຊະເລີຍທີ່ຖືກກວດຕ້ອນມາຈາກຢູດາ ສ່ວນ **ຜູ້ກວດຣາຊການແລະເຈົ້າແຂວງ** ຄົນອື່ນໆເປັນຄົນເມເດັຽຫລືເປເຊັຽ ກະສັດເຫັນຊອບລາວກໍເພາະວ່າຄຸນລັກສະນະຂອງລາວນັ້ນເຫນືອກວ່າຄົນອື່ນໆ. ກະສັດຈຶ່ງມີແຜນການທີ່ຈະແຕ່ງຕັ້ງລາວໃຫ້ເປັນ **ຜູ້ຮັບຜິດຊອບທົ່ວຣາຊອານາຈັກ.** ໃນສມັຍນີ້ກໍແມ່ນຕຳແຫນ່ງຂອງນາຍົກຣັຖມົນຕຣີ. ສ່ວນ **ຜູ້ກວດຣາຊການແລະເຈົ້າແຂວງ** ຄົນອື່ນໆວາງແຜນທີ່ຈະຈັດການລາວ. ພວກເຂົາບໍ່ມັກລາວກໍຍ້ອມວ່າລາວເປັນ **ຄົນສັດຊື່ ແລະບໍ່ເຮັດສິ່ງທີ່ຜິດຫລືການ**

**ເສື່ອມເສັຽໃດໆ.** ພວກເຂົາບໍ່ສາມາດຊອກຫາຈຸດອ່ອນໃນຄຸນລັກສະນະຂອງລາວ.

ດານີເອນບໍ່ໄດ້ທະເຍີທະຍານກັບຕຳແໜ່ງໃດໆຕາມຄວາມໄຝ່ຝັນກັບຂອງຊາວໂລກ. ລາວມີຄວາມໂຄຣົບຕໍ່ກະສັດ ແລະລາວອຸທິດຕົວຕໍ່ພຣະເຈົ້າຂອງລາວ. ສັດຕຣູຂອງລາວບໍ່ສາມາດຫາຄວາມຜິດຂອງລາວໃນຄຸນລັກສະນະຂອງລາວ ຫລືໃນໜ້າທີ່ການຮັບຜິດຊອບຂອງລາວ ພວກເຂົາຈຶ່ງເວົ້າກັນວ່າ "**ເຮົາຈະຫາເຣື່ອງມາຟ້ອງຮ້ອງດານີເອນບໍ່ໄດ້ດອກ ນອກຈາກເຣື່ອງທີ່ກ່ຽວຂ້ອງກັບສາສນາຂອງລາວເທົ່ານັ້ນ.**"

ຖ້າພວກເຮົາດຳເນີນຊີວິດໃນທາງຂອງພຣະເຈົ້າ ຜູ້ທີ່ບໍ່ເຊື່ອໃນພຣະເຈົ້າທີ່ຢູ່ອ້ອມຂ້າງອ້ອມແອ້ວຂອງພວກເຮົາ ກໍຈະເຫັນຄວາມແຕກຕ່າງໃນກິຣິຍາທ່າທາງແລະການກະທຳຂອງພວກເຮົາ. ພວກເຮົາອາດຈະປະເຊີນກັບຜູ້ທີ່ຕໍ່ຕ້ານກັບພວກເຮົາ ຍ້ອນຄວາມເຊື່ອຂອງພວກເຮົາເໝືອນກັນກັບດານີເອນ. ເຖິງຢ່າງໃດກໍຕາມ ພວກເຮົາມີພຣະຜູ້ໂຜດໃຫ້ພົ້ນອົງນຶ່ງ ພຣະອົງເຂົ້າໃຈ ເມື່ອພວກເຮົາໄດ້ຮັບຄວາມທຸກລຳບາກໃນການກະທຳດີ. ພຣະເຢຊູຊົງສະຖິດຢູ່ນຳພວກເຮົາເມື່ອພວກເຮົາຜ່ານຜ່າຄວາມລຳບາກຕ່າງໆ. ເມື່ອມີຄວາມລຳບາກ ພວກເຮົາຈະໄດ້ຮັບການເລົ້າໂລມອັນໃຫຽ່ຫລວງເພາະວ່າພຣະອາຈານໄດ້ຊົງກ່າວວ່າ "ໃນໂລກນີ້ພວກທ່ານຈະມີຄວາມທຸກລຳບາກ ແຕ່ຈົ່ງຊື່ນໃຈເທາະ ຝ່າຍເຮົາໄດ້ຊະນະໂລກແລ້ວ" (ໂຢຮັນ 16:33). ຜູ້ທີ່ມີພຣະເຈົ້າເປັນຜູ້ສະແດງອອກໃຫ້ເຫັນຄຸນລັກສະນະທີ່ປາສຈາກການຕິຕຽນໃນໜ້າທີ່ຮັບຜິດຊອບຕ່າງໆ.

- ♦ ໄທບ້ານໄທເມືອງໄດ້ເວົ້າວ່າ ທ່ານໄດ້ສະແດງອອກໃຫ້ເຫັນຄຸນລັກສະນະທີ່ປາສຈາກການຕິຕຽນຕ່າງໆຫລືບໍ່? ເປັນຫຍັງ? ເປັນຫຍັງບໍ່?
- ♦ ທ່ານມີຄຸນລັກສະນະອັນໃດທີ່ເປັນຕາໜ້ານັບຖື?
- ♦ ທ່ານຈະສາມາດຊັ່ງຊາໄດ້ຢ່າງໃດ ໃນການໂຄຣົບຕໍ່ຣັຖບານແລະການອຸທິດຕົວຕໍ່ພຣະເຈົ້າ?
- ♦ ຄວາມເຊື່ອຂອງດານີເອນໄດ້ຊ່ອຍຫລໍ່ຫລອມຄຸນລັກສະນະຂອງລາວໄດ້ຢ່າງໃດ? ສຳລັບຂອງທ່ານເດ?

**ຂ. <u>ຝຶກຝົນໃຫ້ມີຄວາມເຊື່ອອັນກ້າຫານ</u>** (ດານີເອນ 6:10-13, 16)

ສັດຕຣູຂອງດານີເອນຮູ້ວ່າລາວເປັນຜູ້ທີ່ບໍ່ປະການອ້ອນວອນ. ພວກເຂົາໄດ້ສັງເກດເຫັນລາວຄຸເຂົ່າລົງອ້ອນວອນ ປິ່ນໜ້າໄປທາງ **ນະຄອນເຢຣູຊາເລັມ.** ໃນເຮືອນຂອງລາວຢູ່ຊັ້ນເທິງນັ້ນມີ **ປ່ອງຢ້ຽມເທິງສາມປ່ອງຢູ່ເຊິ່ງນະຄອນເຢຣູຊາເລັມ.** ຍາມລາວອ້ອນວອນລາວເປີດປ່ອງຢ້ຽມໄວ້ ຈຶ່ງບໍ່ເປັນການຍາກເລີຍທີ່ຈະສອບແນມເບິ່ງລາວ. ລາວອ້ອນວອນ **ມື້ລະສາມເທື່ອ.** ລາວຄົງຈະຄອງຄອຍເຖິງນະຄອນເຢຣູຊາເລັມໃນຂນະທີ່ລາວອ້ອນວອນ. **ນະຄອນເຢຣູຊາເລັມ** ເປັນເມືອງສຳຄັນເປັນພິເສດສຳລັບພວກຢິວທີ່ຖືກກວດຕ້ອນມາເປັນຊະເລີຍໃນປະເທດບາບີໂລນ. ຊາວຢິວທີ່ເປັນຊະເລີຍຄອງຄອຍທີ່ຈະໄດ້ກັບເມືອເມືອງອັນປະເສີດຕາມພຣະສັນຍາຂອງອົງພຣະຜູ້ເປັນເຈົ້າ (ເຢຣາມີຢາ 29:10-14) ລາວຮູ້ເຣື່ອງລາວຂອງ **ຄຳສັ່ງ** ບໍ່ໃຫ້ປະຊາຊົນຜູ້ໃດ **ທູນຂໍສິ່ງນຶ່ງສິ່ງໃດຈາກພຣະຫລືຄົນໃດໆ ເວັ້ນໄວ້ແຕ່ຈາກ** ກະສັດ. ລາວຮູ້ດີວ່າ ຖ້າລາວຝ່າຝືນຄຳສັ່ງນີ້ ລາວຈະຕ້ອງຖືກໂຍນເຂົ້າໄປໃນຖ້ຳສິງ.

ເຖິງແມ່ນວ່າ ລາວຮູ້ເຖິງໂທດທີ່ຈະໄດ້ຮັບ ລາວກໍບໍ່ໄດ້ຢຸດຢ່ອນໃນການ **ອ້ອນວອນຕໍ່ພຣະເຈົ້າຂອງລາວມື້ລະສາມເທື່ອເປັນປະຈຳ.** ລາວຈະບໍ່ໃຫ້ຄວາມເຊື່ອຂອງລາວລົງລອຍໄປໃນທາງຜິດທີ່ຈະໄປໂຄຣົບຕໍ່ **ຄຳສັ່ງ** ໃໝ່ຂອງກະສັດທີ່ພຣະອົງຕັດສັ່ງໄປແລ້ວກໍເກີດຄວາມເສັຽໃຈໄປຕາມພາຍຫລັງ. ບາງຄັ້ງພວກເຮົາກໍເປັນເຊັ່ນກັນ ເມື່ອຕັດສິນໃຈເຮັດອັນໃດອັນນຶ່ງລົງໄປແລ້ວ ກໍເກີດຄວາມເສັຽໃຈໄປຕາມພາຍຫລັງ. ເຫດການນີ້ໄດ້ເກີດຂຶ້ນກັບກະສັດດາຣິອຸດ (ດານີເອນ 6:6-9). ເມື່ອພຣະອົງພົບວ່າ ຊີວິດຂອງຜູ້ທີ່ພຣະອົງໄວ້ວາງໃຈໄດ້ຫລາຍທີ່ສຸດຢູ່ໃນຂັ້ນເຖິງແກ່ຄວາມຕາຍ "ພຣະອົງກໍຊົງເປັນທຸກໃນພຣະທັຍ ຈຶ່ງຊົງຄິດຫາຊ່ອງທາງຊ່ອຍເຫລືອດານີເອນ" (6:14). ເມື່ອພະອົງໄດ້ຊົງຕັດສັ່ງໄປໃຫ້ເປັນກົດໝາຍແລ້ວພຣະອົງກໍເຮັດຫຍັງບໍ່ໄດ້ ພຣະອົງໄດ້ພຽງແຕ່ຊົງກ່າວຕໍ່ດານີເອນວ່າ "**ຂໍໃຫ້ພຣະເຈົ້າຂອງທ່ານຜູ້ທີ່ທ່ານໄດ້ຮັບໃຊ້ດ້ວຍຄວາມຈົງຮັກພັກດີນັ້ນ ຈົ່ງຊ່ອຍເຫລືອທ່ານສາ.**"

ໃນຂນະທີ່ພວກເຮົາບໍ່ສາມາດຈະຄວບຄຸມສະຖານະການທີ່ພວກເຮົາປະເຊີນຢູ່ນັ້ນ ພວກເຮົາຍ່ອມມີທາງເລືອກຢູ່ສເມີວ່າພວກເຮົາຈະເລືອກເອົາທາງໃດ. ໃນຂນະທີ່ປະເຊີນກັບຄວາມຕາຍ ດານີເອນເລືອກບໍ່ໃຫ້ຄວາມເຊື່ອຂອງລາວ

ລົງລອຍໄປໃນທາງຜິດ ເຖິງແມ່ນວ່າໃນເວລາອັນຈຳນັ້ນ. ການກະທຳຂອງລາວໄດ້ເປັນແບບຢ່າງໃຫ້ແກ່ພວກເຮົາວ່າຈະຕອບສນອງຕໍ່ເຫດການຢ່າງໃດໃນເມື່ອຄວາມເຊື່ອຂອງພວກເຮົາຖືກທ້າທາຍ.

♦ ມີທາງໃດແດ່ທີ່ທ່ານໄດ້ຝຶກຝົນໃຫ້ຄວາມເຊື່ອຂອງທ່ານມີຄວາມກ້າຫານ? 1. 2. 3. 4.
♦ ທ່ານຈະປ່ຽນແປງອັນໃດແດ່ໃນຊີວິດຂອງການອ້ອນວອນຂອງທ່ານ ເພື່ອຄົນອື່ນຈະຮັບຮູ້ວ່າທ່ານເປັນຜູ້ທີ່ອ້ອນວອນເປັນປະຈຳ?
♦ ເປັນຫຍັງທ່ານຈຶ່ງຄິດວ່າການອ້ອນວອນນັ້ນສຳຄັນຫລາຍຕໍ່ດານີເອນ? ເປັນຫຍັງການອ້ອນວອນນັ້ນສຳຄັນຫລາຍສຳລັບທ່ານ?

## 3. <u>ໄວ້ວາງໃຈພຣະເຈົ້າເຕັມຂນາດ</u> (ດານີເອນ 6:19-23)

ກະສັດດາຣິອຸດນອນບໍ່ຫລັບຫມົດຄືນຍ້ອນວ່າລາວຄິດເປັນຫ່ວງດານີເອນ. ພຣະອົງບໍ່ມີອາລົມໃນການລື້ນເລີງແລະບໍ່ກິນອາອາຫານ (ດານີເອນ 6:18). ຖ້າກະສັດອົງນີ້ຮູ້ຈັກກັບພຣະເຈົ້າຂອງລາວ ພຣະອົງກໍຈະພົບການຊ່ອຍບັນເທົາໃນຄວາມກັງວົນຂອງພຣະອົງ. ປາກົດວ່າພຣະອົງນັ້ນກັງວົນຕໍ່ເຫດການຂອງລາວຫລາຍກວ່າລາວເອງ. ດານີເອນມີຄວາມເຊື່ອໃນພຣະເຈົ້າ ກະສັດດາຣິອຸດບໍ່ມີ. ພຣະອົງບໍ່ຮູ້ວ່າພຣະອົງສາມາດນຳພາຣະອັນຫນັກມາມອບໄວ້ກັບພຣະເຈົ້າອົງຊຶ່ງເປັນຫ່ວງໃຍພຣະອົງຫລາຍ (1 ເປໂຕ 5:7). ໂຊກຮ້າຍແທ້ໆ ຜູ້ທີ່ບໍ່ເຊື່ອຈະຕ້ອງຮ້ອນຮົນກັບຄວາມກັງວົນເພາະວ່າພວກເຂົາບໍ່ໄວ້ວາງໃຈໃນພຣະເຈົ້າໃນທຸກສະພາບການ-ໂດຍສະເພາະແລ້ວແມ່ນສະພາບການອັນໜັກໜ່ວງ.

ກະສັດນັ້ນບໍ່ສາມາດຈະຖ້າວ່າດານີເອນນັ້ນເປັນຢ່າງໃດ. **ພຣະຣາຊາຊົງຕື່ນຈາກບັນທົມແຕ່ເດິກ ແລະຟ້າວສະເດັດໄປຍັງຖ້ຳສິງ.** ກະສັດດາຣິອຸດເລີ້ມເຂົ້າໃຈວ່າດານີເອນນະມັສການພຣະເຈົ້າທີ່ແຕກຕ່າງໄປຈາກພຣະທັງຫລາຍທີ່ພຣະອົງໄດ້ນະມັສການໃນແຜ່ນດິນຂອງພຣະອົງ.

ກະສັດດາຣິອຸດໄດ້ປະກາດວ່າ **ດານີເອນ** ເປັນ **ຜູ້ຮັບໃຊ້ຂອງພຣະເຈົ້າອົງຊົງພຣະຊົນຢູ່.** ພຣະອົງສັງເກດໄດ້ວ່າ ດານີເອນມີຄວາມສັມພັນກັບພຣະເຈົ້າຂອງລາວ. ພຣະອົງບໍ່ສາມາດເຫັນພຣະເຈົ້າຂອງດານີເອນ ແຕ່ພຣະອົງຮູ້ວ່າດານີເອນໄດ້ເວົ້າກັບພຣະເຈົ້າແລະຮັບໃຊ້ພຣະເຈົ້າຂອງລາວດ້ວຍຄວາມຈົງຮັກພັກດີຢູ່ຕລອດມາ. **ພຣະເຈົ້າອົງຊົງພຣະຊົນຢູ່** ອົງນີ້ ມີຄວາມແຕກຕ່າງກັບຮູບໂຄຣົມທີ່ພຣະອົງຂາບໄຫວ້ໃນແຜ່ນດິນຂອງພຣະອົງ-ຮູບໂຄຣົບບໍ່ມີຊີວິດ ຮູບໂຄຣົບຫາຍໃຈບໍ່ໄດ້ໄປບໍ່ເປັນ ເບິ່ງບໍ່ເຫັນ ບໍ່ໄດ້ຍິນແລະຟັງບໍ່ເປັນ.

ກະສັດຢາກຮູ້ວ່າພຣະເຈົ້າຂອງດານີເອນມີຄວາມສາມາດ **ຊ່ອຍ** ລາວ **ໃຫ້ພົ້ນຈາກສິງບໍ່?** ເມື່ອດານີເອນໄດ້ບອກພຣະອົງວ່າ **ພຣະເຈົ້າຊົງໃຊ້ເທວະດາຂອງພຣະອົງມາອັດປາກສິງໄວ້** ເມື່ອເປັນດັ່ງນັ້ນ**ພຣະຣາຊາໄດ້ຊົງຊົມຊື່ນຍິນດີທີ່ສຸດ.** ກະສັດບໍ່ໄດ້ສູນເສັຽຜູ້ທີ່ໃຫ້ຄຳປຶກສາທີ່ພຣະອົງໄວ້ວາງໃຈໄດ້. ໃນຂນະດຽວກັນ ພຣະອົງກໍຮູ້ວ່າບໍ່ມີອັນໃດເລີຍທີ່ຈະຍາກເກີນໄປສຳລັບ **ພຣະເຈົ້າອົງຊົງພຣະຊົນຢູ່.**

ຜູ້ທີ່ເຊື່ອສາມາດໄວ້ວາງໃຈໃນພຣະເຈົ້າໄດ້ວ່າ ພຣະອົງສາມາດຊ່ອຍພວກເຂົາໃຫ້ຫລຸດພົ້ນຈາກພັຍອັນຕະລາຍໃນຂນະທີ່ພວກເຂົາກະທຳໃນສິ່ງທີ່ຖືກຕ້ອງ. ເຖິງແມ່ນວ່າຈະໄວ້ວາງໃຈໃນພຣະເຈົ້າຢ່າງເຕັມຂນາດກໍບໍ່ໄດ້ຫມາຍຄວາມວ່າຈະໄດ້ຫລຸດພົ້ນຈາກພັຍອັນຕະລາຍຢ່າງອັສຈັນສເມີໄປ. ຂ້າພະເຈົ້າຮູ້ຈັກກັບຜູ້ປະກາດຂ່າວປະເສີດສອງຄົນໄດ້ດີ ພວກເຂົາທັງສອງຖືກຂ້າໃນການຮັບໃຊ້. ເຖິງແມ່ນວ່າດານີເອນບໍ່ໄດ້ຖືກຊ່ອຍໃຫ້ຫລຸດພົ້ນຈາກພັຍອັນຕະລາຍເຖິງແກ່ຄວາມຕາຍ ລາວກໍຍັງເຊື່ອໃນອົງພຣະຜູ້ເປັນເຈົ້າຢູ່ສເມີ.

♦ ທ່ານຈະສະແດງອອກໃຫ້ເຫັນໄດ້ຢ່າງໃດວ່າທ່ານໄດ້ໄວ້ວາງໃຈໃນພຣະເຈົ້າ?
♦ ຄົນອື່ນຈະບັນລະຍາຍຄຸນລັກສະນະຂອງທ່ານວ່າເປັນຜູ້ຮັບໃຊ້ຂອງອົງພຣະຜູ້ເປັນເຈົ້າທີ່ຊົງພຣະຊົນຢູ່ໄດ້ຫລືບໍ່? ໄດ້ບໍ່? ຫລືວ່າເປັນຫຍັງບໍ່ໄດ້?
♦ ຄວາມເຊື່ອຂອງທ່ານໃນພຣະເຈົ້າໄດ້ເຮັດຫຍັງແດ່ໃຫ້ທ່ານໃນເຣື່ອງຄວາມກະວົນກະວາຍ?
♦ ພຣະເຈົ້າອົງທ່ຽງແທ້ມີຄວາມແຕກຕ່າງກັບພຣະອື່ນໆຢ່າງໃດແດ່? 1. 2. 3.
♦ ທ່ານໄດ້ໃຊ້ຊີວິດເຫມືອນກັບວ່າພຣະເຈົ້າສາມາດຊ່ອຍທ່ານໃຫ້ພົ້ນຈາກພັຍອັນຕະລາຍຫລືບໍ່? ເປັນຫຍັງ? ຫລືວ່າ

ເປັນຫຍັງບໍ່?

**4. ໃຫ້ຄຳພຍານທີ່ມີພະລັງ** (ດານີເອນ 6:25-27)

ກະສັດດາຣິອຸດສຳນຶກໄດ້ວ່າ ດານີເອນໄດ້ນະມັສການພຣະເຈົ້າອົງທ່ຽງແທ້ແຕ່ອົງດຽວ ພຣະອົງຊົງເໜືອກວ່າສັພທຸກສິ່ງເທົ່າທີ່ກະສັດເຄີຍປະສົບການມາ. ກະສັດຕ້ອງການໃຫ້ທຸກຄົນໄດ້ຮັບຮູ້ພຣະເຈົ້າ. ພຣະອົງຈຶ່ງຊົງປະກາດໃຫ້ໄພ່ຟ້າປະຊາກອນຂອງພຣະອົງໃຫ້ຮູ້ກ່ຽວກັບພຣະເຈົ້າອົງນີ່ງຊຶ່ງມີຣາຊອານາຈັກຂອງພຣະອົງ. ກະສັດຮັບຮູ້ວ່າ **ຣາຊອານາຈັກຂອງ ພຣະເຈົ້າ ຈະບໍ່ຖືກທຳລາຍ ແລະພຣະຣາຊອຳນາດຂອງພຣະອົງຈະບໍ່ໝົດສິ້ນຈັກເທື່ອ.**

**ພຣະເຈົ້າຜູ້ຊົງພຣະຊົນຢູ່** ມີພະລັງອຳນາດ **ພຣະອົງຊ່ອຍຊີວິດໃຫ້ພົ້ນພັຍ.** ກະສັດອົງນີ້ຍອມຮັບວ່າພຣະເຈົ້າອົງນີ້ມີພະລັງອຳນາດຫລາຍ. **ພຣະອົງຊົງຊ່ອຍດານີເອນໃຫ້ພົ້ນຈາກແຂ້ວສິງ.**

ເມື່ອພວກເຮົາລະນຶກໄດ້ວ່າພຣະເຈົ້າແມ່ນຜູ້ໃດແລະພຣະອົງຊົງກະທຳອັນໃດແດ່ເພື່ອພວກເຮົາ ພວກເຮົາກໍສາມາດໃຫ້ເກີດກຳລັງໃຈແກ່ຄົນອື່ນ ໂດຍດຳເນີນຊີວິດສະແດງອອກໃຫ້ຄົນອື່ນເຫັນຄວາມເຊື່ອແລະບອກເລົ່າຄົນອື່ນໃນສິ່ງທີ່ພວກເຮົາຮູ້. ພວກເຮົາບໍ່ຈຳເປັນຈະຕ້ອງຖືກຮ້ອງໃຫ້ມາເປັນສິດຍາພິບານກ່ອນ ພວກເຮົາຈຶ່ງຈະໃຫ້ກຳລັງໃຈແກ່ຄົນອື່ນຈາກຄຳພຍານຂອງພວກເຮົາ. ພວກເຮົາພຽງແຕ່ເວົ້າໃຫ້ຄົນອື່ນຟັງໃນສິ່ງພວກເຮົາຮູ້ວ່າເປັນຄວາມຈິງແທ້. ອັນນີ້ແມ່ນສິ່ງທີ່ຄຣິສຕຽນທຸກຄົນສາມາດກະທຳໄດ້.

ຄວາມຈົງຮັກພັກດີຂອງດານີເອນຕໍ່ພຣະເຈົ້າເປີດໂອກາດໃຫ້ກະສັດດາຣິອຸນຮຽນຮູ້ເຣື່ອງລາວຂອງພຣະເຈົ້າ. ຖ້າດານີເອນບໍ່ດຳເນີນຊີວິດດ້ວຍຄວາມຊັດຊື່ ລາວບໍ່ສັດຊື່ໃນໜ້າທີ່ການງານຮັບຜິດຊອບ ແລະບໍ່ສັດຊື່ຕໍ່ພຣະເຈົ້າ ກະສັດດາຣິອຸດກໍຈະບໍ່ຮູ້ວ່າພຣະເຈົ້າຂອງລາວເປັນຢ່າງໃດ.

ໃນເຣື່ອງລາວຂອງດານີເອນ ພວກເຮົາສາມາດເຫັນໄດ້ວ່າ ຜູ້ທີ່ຈົງຮັກພັກດີຕໍ່ພຣະເຈົ້າມີອິດທິພົນຫລາຍ ພວກເຂົາສາມາດຊັກຊວນສັມຜັດກັບຄົນຈຳນວນຫລວງຫລາຍແລະໃນທຸກວິທີທາງທີ່ບໍ່ສາມາດຄາດຝັນໄດ້. ລາວອຸທິດຕົວໃຫ້ພຣະເຈົ້າກ່ອນອື່ນໝົດ ຈຶ່ງບໍ່ຄາດຝັນວ່າຊີວິດຂອງລາວໄດ້ສັມຜັດກັບທຸກໆຄົນໃນຣາຊອານາຈັກເປເຊັຽ. ລາວຖືກພວກເຂົາເຮັດໃສ່ຢ່າງບໍ່ຍຸດຕິທັມເລີຍ ແຕ່ລາວດຳເນີນຊີວິດດ້ວຍຄວາມສັດຊື່ ແລະລາວຈະບໍ່ໃຫ້ຄວາມເຊື່ອຂອງລາວໄປລົງລອຍກັບໃນທາງທີ່ຜິດ. ເມື່ອພວກເຮົາດຳເນີນຊີວິດດ້ວຍຄວາມເຊື່ອທີ່ບໍ່ປ່ຽນຜັນ ພຣະເຈົ້າບໍ່ພຽງໃຫ້ກຽດຄວາມເຊື່ອນັ້ນ ແຕ່ພວກເຮົາຈະໄດ້ກາຍເປັນທີ່ພຣະຄຸນຂອງພຣະອົງສຳລັບຜູ້ທີ່ຢູ່ໃກ້ຄຽງພວກເຮົາ-ເພື່ອພຣະກຽດແລະພຣະສະງ່າຣາສີຂອງພຣະອົງ.

- ♦ ເປັນຫຍັງຈຶ່ງສຳຄັນແທ້ທີ່ຄຣິສຕຽນຈະຕ້ອງໃຫ້ຄຳພຍານທີ່ມີພະລັງ?
- ♦ ໃຫ້ຊັ່ງຊາເບິ່ງຈາກ 1 ຫາ 5 ວ່າທ່ານໄດ້ໄວ້ວາງໃຈໃນພຣະເຈົ້າຫລາຍປານໃດ? ເປັນຫຍັງ?
- ♦ ກະສັດດາຣິອຸດໄດ້ຮຽນຮູ້ອັນໃດແດ່ໃນເຣື່ອງລາວຂອງພຣະເຈົ້າ?
- ♦ ທ່ານຈະກະທຳຢ່າງໃດແດ່ຈຶ່ງຈະໄດ້ກາຍເປັນຜູ້ທີ່ໃຫ້ກຳລັງໃຈແກ່ຄົນອື່ນ?
- ♦ ທ່ານຈະໄດ້ປ່ຽນແປງອັນໃດແດ່ໃນເຣື່ອງຄວາມຈົງຮັກພັກດີຕໍ່ພຣະເຈົ້າຂອງທ່ານ ຄົນອື່ນຈຶ່ງຈະມີໂອກາດໄດ້ຮຽນຮູ້ເຣື່ອງລາວຂອງພຣະເຈົ້າ?
- ♦ ມີບາດກ້າວອັນໃດທີ່ຈະຊ່ອຍທ່ານໃຫ້ກາຍເປັນທີ່ພຣະຄຸນຂອງພຣະເຈົ້າໃຫ້ກັບຄົນທີ່ຢູ່ໃກ້ຄຽງທ່ານ?
- ♦ ຫລັງຈາກສຶກສາບົດຮຽນນີ້ແລ້ວ ທ່ານຈະຕ້ອງປ່ຽນແປງອັນໃດແດ່ໃນຊີວິດຂອງທ່ານ?